**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະຫະພັນກຳມະບານກະຊວງສຶກສາທິການ ແລະ ກິລາ
ໜ່ວຍຮາກຖານກຳມະບານກົມແຜນການ
ຈຸກຳມະບານຫ້ອງການພັດທະນາຊັບພະຍາກອນມະນຸດ ນະຄອນຫຼວງວຽງຈັນ, ວັນທີ ຕຸລາ 2023

# ບົດລາຍງານ

**ຮຽນ:** ສະຫາຍ ປະທານກຳມະບານ ຮາກຖານກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ທີ່ນັບຖື.
**ເລື່ອງ:** ລາຍງານຜົນການເຄື່ອນໄຫວວຽກງານກຳມະບານ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2024 ຂອງຈຸຫ້ອງການພັດທະນາຊັບພະຍາກອນມະນຸດ, ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ.

## I. ຈຸດປະສົງ

ເພື່ອລາຍງານ ຜົນການຈັດຕັ້ງປະຕິບັດວຽກງານກຳມະບານ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ໃນປີ 2024 ຂອງຈຸຫ້ອງການພັດທະນາຊັບພະຍາກອນມະນຸດ, ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. ໂດຍເນັ້ນໃສ່ວຽກງານຂະບວນການ ປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ເພື່ອຜູກແໜ້ນຄວາມສາມັກຄີ, ຊຸກຍູ້ສົ່ງເສີມ ຊ່ວຍເຫຼືອເບິ່ງແຍງເຊິ່ງກັນລະກັນ ຂອງສະມາຊິກກຳມະບານ ແລະ ວຽກງານວິຊາສະເພາະທີ່ພົ້ນເດັ່ນ ຂອງຈຸກຳມະບານຫ້ອງການພັດທະນາຊັບພະຍາກອນມະນຸດ, ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ.

## II. ສະພາບລວມ

ຫ້ອງການພັດທະນາຊັບພະຍາກອນມະນຸດເປັນເສນາທິການໃຫ້ແກ່ກົມແຜນການ ແລະ ທັງເປັນກອງເລຂາໃຫ້ແກ່ຄະນະກຳມາທິການ ແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ(ຄຊພຊ) .ຫ້ອງການພັດທະນາຊັບພະຍາກອນມະນຸດ, ມີພະນັກງານລັດ ທັງໝົດຈຳນວນ 06 ທ່ານ, ເປັນເພດຍິງ 04 ທ່ານ ໃນນັ້ນພະນັກງານຍົກລະດັບການສຶກສາປະລິນຍາໂທຢູ່ຕ່າງປະເທດ(ສສ ຫວຽດນາມ) ຈຳນວນ 01 ທ່ານ, ເປັນຍິງ 1 ທ່ານ.

ປະຈຸບັນຈຸກຳມະບານຫ້ອງການພັດທະນາຊັບພະຍາກອນມະນຸດແມ່ນຢູ່ພາຍໃຕ້ການຊີ້ນຳ ນຳພາຂອງໜ່ວຍກຳມະບານຮາກຖານກົມແຜນການ, ສະຫະພັນກຳມະບານກະຊວງສຶກສາທິການແລະ ກິລາ; ມີສະມາຊິກກຳມະບານທັງໝົດ 05 ສະຫາຍ (ຍິງ 04 ສະຫາຍ); ໃນນັ້ນ ເປັນສະມາຊິກພັກສົມບູນ 03 ສະຫາຍ (ຍິງ 02 ສະຫາຍ), ສະມາຊິກພັກສຳຮອງ 2 ສະຫາຍ (ຍິງ 1 ສະຫາຍ), ເປັນສະມາຊິກຊາວໜຸ່ມທັງໝົດ 05 ສະຫາຍ (ຍິງ 03 ສະຫາຍ) ແລະ ສະມາຊິກແມ່ຍິງ ທັງໝົດມີ 03 ສະຫາຍ.

## III. ຕີລາຄາການເຄື່ອນໄຫວວຽກແຕ່ລະດ້ານ (ອີງໃສ່ຂໍ້ແຂ່ງຂັນ 5 ເປັນເຈົ້າ)

**1. ວຽກງານຝຶກຝົນຫຼໍ່ຫຼອມທາງດ້ານການເມືອງ-ແນວຄິດ**

ໃນໄລຍະ 1 ປີຜ່ານມາເຖິງວ່າພວກເຮົາຈະພົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດຝືດເຄືອງກໍຕາມ ພະນັກງານ-ລັດຖະກອນໄດ້ມີຄວາມພະຍາຍາມສຸມໃສ່ຈັດຕັ້ງປະຕິບັດໜ້າທີ່ການເມືອງ ແລະ ວິຊາສະເພາະ ເຄື່ອນໄຫວວຽກງານຕາມພາລະບົດບາດມີຄຸນທາດການເມືອງ, ມີຄຸນສົມບັດສິນທໍາປະຕິວັດທີ່ໜັກແໜ້ນ ເຊື່ອໝັ້ນຕໍ່ການຊີ້ນໍາ ແລະ ການນໍາພາຂອງພັກ ແລະ ຢູ່ໃນການຄຸ້ມຄອງຂອງລັດຢ່າງມີລະບຽບວິໄນສູງ ມີຄວາມສາມັກຄີສະໜິດແໜ້ນຢູ່ອ້ອມຂ້າງການຊີ້ນໍາຂອງພັກ ແລະ ລັດ, ຮັກສາໄດ້ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຢູ່ໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ຮັກສາໄດ້ວັດທະນາທໍາອັນດີງາມຂອງຊາດ ແລະ ອື່ນໆ.

## 2. ວຽກປະຕິບັດກົດໝາຍ ແລະ ລະບຽບການຂອງລັດ

ສະມາຊິກກໍາມະບານ ຈຸຫ້ອງການພັດທະນາຊັບພະຍາກອນມະນຸດ, ກົມແຜນການ ເອົາໃຈໃສ່ປະຕິບັດກົດລະບຽບ, ກົດໝາຍຂອງລັດດັ່ງນີ້:

*1.* ສືບຕໍ່ຜັນຂະຫຍາຍ ແລະ ເຊື່ອມຊຶມມະຕິ, ຄໍາສັ່ງ ແລະ ນິຕິກໍາຕ່າງໆ ຕາມການຊີ້ນໍາຂອງ ຄະນະໜ່ວຍພັກ ກົມແຜນການ ແລະ ຄະນະນໍາກະຊວງສຶກສາທິການ ແລະ ກິລາ;

*2.* ຍຶດໝັ້ນຕໍ່ການນໍາພາຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ຖືເອົາການສຶກສາອົບຮົມແນວຄິດການເມືອງໃຫ້ພະນັງານ-ລັດຖະກອນໃຫ້ມີແນວຄິດອຸ່ນອ່ຽນໝຸ່ນທ່ຽງ, ມີຄຸນທາດການເມືອງສູງ, ມີຄຸນສົມບັດສິນທໍາປະຕິວັດທີ່ບໍລິສຸດພຸດຜ່ອງ, ມີຄວາມສາມັກຄີຢ່າງໜັກແໜ້ນ, ມີຄວາມສະຫງົບ, ມີຄວາມປອດໄພເປັນລະບຽບຮຽບຮ້ອຍພາຍໃນກົມ, ປະຕິບັດຕາມແນວທາງນະໂຍບາຍຂອງພັກ ແລະມີຄວາມສາມັກຄີຮັກແພງຊ່ວຍເຫຼືອຊຶ່ງກັນ ແລະ ກັນ.

## 3. ວຽກພັດທະນາຕົນເອງ ແລະ ການຈັດຕັ້ງ

ສະມາຊິກກໍາມະບານ ຈຸຫ້ອງການພັດທະນາຊັບພະຍາກອນມະນຸດມີຄວາມຫ້າວຫັນໃນການຊອກຮູ້ຮໍ່າຮຽນເພື່ອຍົກລະດັບຄວາມຮູ້ ຄວາມສາມາດຂອງຕົນເອງ ຢູ່ເລື້ອຍໆ; ເຊິ່ງສະແດງອອກຢ່າງຊັດເຈນ ຄື: ໃນໄລຍະຜ່ານມາ, ສະມາຊິກກໍາມະບານ ຈຸຫ້ອງການພັດທະນາຊັບພະຍາກອນມະນຸດສາມາດສອບເສັງໄດ້ທຶນໄປຮຽນຕໍ່ລະດັບປະລິນຍາໂທ ຢູ່ຕ່າງປະເທດ ມີ 01 ຄົນ ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຊື່ ແລະ ນາມສະກຸນ | ລາຍລະອຽດ |
|---|---|---|
| 1 | **ນ.ຈາລຸວັນ ບຸນພະຄົມ** | ກໍາລັງສຶກສາລະດັບປະລິນຍາໂທ ຢູ່ປະເທດຫວຽດນາມ (2022-2024). |

ພ້ອມດຽວກັນນີ້ ກໍ່ໄດ້ຮັບການຝຶກອົບຮົມຍົກລະດັບຂີດຄວາມສາມາດໄລຍະສັ້ນ ທັງພາຍໃນ ແລະ ຕ່າງປະເທດຄື: ຝຶກອົບຮົມຍົກລະດັບພາວະຄວາມເປັນຜູ້ນໍາພາຍໃຕ້ໂຄງການ ສະຖາບັນລາວ-ອົດສະຕຣາລີ ຈໍານວນ 02 ຄັ້ງ ແລະ ເຂົ້າຈໍານວນ 4 ເທື່ອຄົນ, ປະຊຸມຝຶກອົບຮົມຢູ່ສະຫະລັດອາເມລິກາ 1 ຄັ້ງ 1 ເທື່ອຄົນ, ອົດສະຕາລີ 2 ຄັ້ງ 2 ເທື່ອຄົນ, ຍີ່ປຸ່ນ 1 ຄັ້ງ 1 ເທື່ອຄົນ ແລະ ອື່ນໆ.

## 4. ວຽກປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ

- ຈຸກໍາມະບານຫ້ອງການພັດທະນາຊັບພະຍາກອນມະນຸດ , ກົມແຜນການ ເອົາໃຈໃສ່ປະຕິບັດນະໂຍບາຍຂອງ 3 ອົງການຈັດຕັ້ງມະຫາຊົນຢ່າງເປັນປົກກະຕິ. ໄດ້ໄປຢ້ຽມຢາມພະນັກງານ/ສະມາຊິກກໍາມະບານ ທີ່ນອນໂຮງໝໍ ຫຼື ເກີດລູກ ພ້ອມທັງປະກອບສ່ວນງົບປະມານຈໍານວນໜຶ່ງ ຕາມຄວາມສາມາດ ແລະ ຄວາມສະໝັກໃຈ.

- ສະມາຊິກກຳມະບານ ມີສິດຍື່ນໜັງສືສະເໜີຫາໜ່ວຍຮາກຖານກຳມະບານກົມແຜນການ ໂດຍຄັດຕິດໃບຢັ້ງຢືນນອນໂຮງໝໍ ເພື່ອສະເໜີຂໍເງິນອຸດໜູນຄ່າປິ່ນປົວຄືນ ຕາມຄວາມເໝາະສົມ.

**5. ວຽກປະຕິບັດໜ້າທີ່ວິຊາສະເພາະຢ່າງປະກົດສ້າງ**

- ຈຸກຳມະບານຫ້ອງການພັດທະນາຊັບພະຍາກອນມະນຸດ,ກົມແຜນການ ໄດ້ນຳໃຊ້ລະບົບ ICT ແລະ ສື່ອອນລາຍຕ່າງໆ ເຂົ້າມາໃຊ້ໃນການປະຕິບັດວຽກງານໄດ້ຢ່າງມີປະສິດທິຜົນ; ໂດຍສະເພາະ ໄດ້ນຳໃຊ້ Microsoft Teams ເຂົ້າໃນການຈັດກອງປະຊຸມຜ່ານລະບົບອອນລາຍ ແລະ ນຳໃຊ້ Email, Whats App ໃນການແລກປ່ຽນຂໍ້ມູນຂ່າວສານ.
- ສະມາຊິກກຳມະບານຈຸຫ້ອງການພັດທະນາຊັບພະຍາກອນມະນຸດມີການແລກປ່ຽນຄວາມຮູ້ ດ້ານເຕັກນິກຄອມພິວເຕີ້ ແລະ ເຄື່ອງອີເລັກໂທນິກຕ່າງໆ ເພື່ອນຳມາໝູນໃຊ້ເຂົ້າໃນການປະຕິບັດວຽກງານ ແລະ ການລາຍງານວຽກວິຊາສະເພາະ.

**2. ວຽກຂະບວນການເຄື່ອນໄຫວ ແລະ ວິຊາສະເພາະ**

**ກ. ວຽກງານຂະບວນການ**

- ສຳເລັດການເກັບເງິນສະຕິ ແລະ ເງິນກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງສະຫະພັນກຳມະບານ ປະຈຳປີ 2023 ອີງຕາມແຈ້ງການ ສະບັບເລກທີ 12/ກບ.ສສກ ແລະ ເລກທີ 13/ກບ.ສສກ, ລົງວັນທີ 14 ມີນາ 2023, ສົ່ງໃຫ້ໜ່ວຍກຳມະບານຮາກຖານກົມແຜນການ ໃນວັນທີ 29 ມີນາ 2023 ລວມຈຳນວນເງິນທັງໝົດ 924.000 ກີບ (ເກົ້າແສນຊາວສີ່ພັນກີບຖ້ວນ).
- ໄດ້ເຂົ້າຮ່ວມຂະບວນການເຄື່ອນໄຫວວຽກງານມະຫາຊົນຢ່າງເປັນປົກກະຕິ ເຊັ່ນ: ອອກແຮງງານລວມ, ປ້ອງກັນເວນຍາມ ສຳນັກກະຊວງສຶກສາທິການ ແລະ ກິລາ ໃນໄລຍະບຸນປີໃໝ່ລາວ ພສ 2566 (ຄສ 2023); ອີງຕາມໜັງສືນຳສົ່ງລາຍຊື່ສະບັບເລກທີ 0902/ຜກ, ລົງວັນທີ 11 ເມສາ 2023 ແລະ ອື່ນໆ.
- ເຂົ້າຮ່ວມກອງປະຊຸມຂອງກົມແຜນການ ເພື່ອມອບ-ຮັບໃບຍ້ອງຍໍ ແລະ ຫຼຽນ ເພື່ອຊົມເຊີຍຜົນງານໃນການປະກອບສ່ວນດ້ານເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນຂະບວນການແຂ່ງຂັນຮັກຊາດ, ສ້າງບ້ານພັດທະນາ ແລະ ການຜັນຂະຫຍາຍວຽກງານສາມສ້າງເຂົ້າສູ່ລວງເລິກ ໄລຍະ 5 ປີ (2016-2020), ຄັ້ງວັນທີ 12 ເມສາ 2023, ທີ່ຫ້ອງປະຊຸມ 425 ກະຊວງສຶກສາທິການ ແລະ ກິລາ.
- ຮ່ວມພິທີອວຍພອນຄະນະນຳຂອງກົມແຜນການ ແລະ ສະເຫຼີມສະຫຼອງປີໃໝ່ລາວ ພສ 2566 (ປີ ຄສ 2023) ຢູ່ທີ່ສວນຂອງ ທ່ານ ສີທອງ ສີຂາວ, ຮອງຫົວໜ້າກົມແຜນການ; ໃນວັນທີ 12 ເມສາ 2023.
- ເຂົ້າຮ່ວມຂະບວນການອອກແຮງງານລວມທົ່ວກະຊວງ**(ຮັບຜິດຊອບເຂດສີສະເກດ)** ເພື່ອຂໍານັບຮັບຕ້ອນ ແລະ ຊົມເຊີຍກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກກະຊວງສຶກສາທິການ ແລະ ກິລາ ສະໄໝທີ IX; ອີງຕາມແຈ້ງການຂອງຄະນະພັກກະຊວງສຶກສາທິການແລະ ກິລາ ສະບັບລົງວັນທີ 20 ມິຖຸນາ 2023.
- ເຂົ້າຮ່ວມການເຄື່ອນໄຫວສ້າງຂະບວນການ ກິລາບານເຕະມິດຕະພາບ ຍິງ-ຊາຍ ລະຫວ່າງກົມການເງິນ ແລະ ກົມແຜນການ ເພື່ອຂໍານັບຮັບຕ້ອນ ແລະ ຊົມເຊີຍ ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກກະຊວງສຶກສາທິການ ແລະ ກິລາ ສະໄໝທີ IX. ການແຂ່ງຂັນກິລາມິດຕະພາບດັ່ງກ່າວ ແມ່ນຈັດຂຶ້ນໃນວັນທີ 27 ມິຖຸນາ 2023, ເວລາ 16:00-18:00 ໂມງ ທີ່ເດີ່ນບານເຕະຫຍ້າທຽມ ນິວອາລີນາ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ອີງຕາມໜັງສືເຊີນຈາກໜ່ວຍຊາວໜຸ່ມຮາກຖານກົມການເງິນ, ສະບັບເລກທີ 0015 ໜຊໜ/ກງ, ລົງວັນທີ 22 ມິຖຸນາ 2023.

- ເຂົ້າຮ່ວມການເຄື່ອນໄຫວສ້າງຂະບວນການ ກິລາບານເຕະມິດຕະພາບ ຍິງ-ຊາຍ ລະຫວ່າງກົມແຜນການ(ສສກ) ແລະ ກົມຈັດຫາງານ(ຮສສ) ເພື່ອຂໍ່ານັບຮັບຕ້ອນ ແລະ ຊົມເຊີຍ ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກທັງ 2 ກະຊວງ. ການແຂ່ງຂັນກິລາມິດຕະພາບດັ່ງກ່າວ ແມ່ນຈັດຂຶ້ນໃນວັນທີ 28 ກໍລະກົດ 2023, ເວລາ 15:00-18:00 ໂມງ ທີ່ເດີ່ນບານເຕະຫຍ້າທຽມ ຊ້າງ FC3 ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ອີງຕາມໜັງສືເຊີນຈາກໜ່ວຍຊາວໜຸ່ມຮາກຖານກົມຈັດຫາງານ(ຮສສ), ສະບັບເລກທີ 0027 ໜຊໜ/ກຈງ, ລົງວັນທີ 24 ກໍລະກົດ 2023.

**ຂ. ວຽກວິຊາສະເພາະທີ່ພົ້ນເດັ່ນ**

- ສໍາເລັດການຮ່າງມະຕິ ວ່າດ້ວຍ ການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ ຕອບສະໜອງໃຫ້ແກ່ການພັດທະນາ ໃນເງື່ອນໄຂໃໝ່ ຕາມຄໍາເຫັນຂອງບັນດາທ່ານຄະນະຮອງນາຍົກລັດຖະມົນຕີ;
- ສໍາເລັດກອງປະຊຸມ ກອງປະຊຸມຄົ້ນຄວ້າການທົດລອງດໍາເນີນການສໍາຫຼວດການສະໜອງ ແລະ ຄວາມຕ້ອງການທັກສະຢູ່ຂັ້ນແຂວງ/ນະຄອນຫຼວງ, ທີ່ແຂວງຫຼວງພະບາງ;
- ສໍາເລັດການສ້າງ ແລະ ແຈກຢາຍ ແຜນແບ່ງປັນສັບຊ້ອນ ນັກຮຽນ-ພະນັກງານ ເຂົ້າຮຽນຕໍ່ພາຍໃນປະເທດ ປະຈໍາສົກຮຽນ 2023-2024;
- ສໍາເລັດການສ້າງໂປແກຣມຖານຂໍ້ມູນ ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ;
- ສໍາເລັດການສ້າງເວບຊ່າຍຂອງຫ້ອງການພັດທະນາຊັບພະຍາກອນມະນຸດ ແລະ ກະກຽມເອົາລະບົບດັ່ງກ່າວຂຶ້ນເຊີບເວີຂອງກະຊວງສຶກສາທິການ ແລະ ກິລາ;
- ສໍາເລັດການຝຶກອົບຮົມການສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານຫ້ອງການພັດທະນາຊັບພະຍາກອນມະນຸດ ໃນການນໍາໃຊ້ໂປແກຣມຖານຂໍ້ມູນ ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ;
- ສໍາເລັດການອອກແບບ ຫຼັກສູດຝຶກອົບຮົມກ່ຽວກັບການພັດທະນາຊັບພະຍາກອນມະນຸດ (Modular Training) ສໍາລັບຄະນະກໍາມະການພັດທະນາຊັບພະຍາກອນມະນຸດ ສໍາລັບໂມດູນທີ 1 ແລະ ໂມດູນທີ 2 ພ້ອມທັງສໍາເລັດກອງປະຊຸມນໍາສະເໜີຫຼັກສູດດັ່ງກ່າວ ໃຫ້ແກ່ຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການສະຖາບັນລາວ-ອົດສະຕຣາລີ;
- ສໍາເລັດບົດປະເມີນກາງສະໄໝ ການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະ ນຸດ ແຫ່ງຊາດ ໄລຍະ 2021-2023 ແລະ ແຜນປະຕິບັດງານ ໄລຍະ 2023-2025;
- ສໍາເລັດກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ XI ຂອງຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ;
- ສໍາເລັດການຝຶກອົບຮົມ ໃຫ້ແກ່ຜູ້ຮັບຜິດຊອບການເກັບກໍາຂໍ້ມູນການສໍາຫຼວດຄວາມຕ້ອງການທັກສະຂອງພາກເອກະຊົນ;
- ສໍາເລັດການເກັບກໍາຂໍ້ມູນການສໍາຫຼວດຄວາມຕ້ອງການທັກສະ ຂອງພາກເອກະຊົນ ໃນ 7 ແຂວງເປົ້າໝາຍ: ນະຄອນຫຼວງວຽງຈັນ, ແຂວງ ວຽງຈັນ, ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ, ຫຼວງພະບາງ ແລະ ໄຊຍະບູລີ;
- ສໍາເລັດການປ້ອນຂໍ້ມູນ, ວິເຄາະຂໍ້ມູນ ແລະ ຮ່າງບົດລາຍງານ ຜົນການສໍາຫຼວດຄວາມຕ້ອງການທັກສະຂອງພາກເອກະຊົນ ປີ 2023;
- ສໍາເລັດການຝຶກອົບຮົມກ່ຽວກັບການພັດທະນາຊັບພະຍາກອນມະນຸດ (Modular Training) ໂມດູນທີ 1 ແລະ ໂມດູນທີ 2 ໃຫ້ແກ່ ຄະນະກໍາມະການພັດທະນາຊັບພະຍາກອນມະນຸດ 6 ພາກສ່ວນ: ກະຊວງ ສຶກ

ສາທິການ ແລະ ກິລາ, ພາຍໃນ, ແຜນການ ແລະ ການລົງທຶນ, ສູນກາງສະຫະພັນແມ່ຍິງລາວ, ຄະນະພົວພັນຕ່າງປະເທດສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ;

- ສໍາເລັດການລາຍງານຜົນການຈັດຕັ້ງປະຕິບັດ ແຜນແບ່ງປັນສັບຊ້ອນ ນັກຮຽນ-ພະນັກງານ ເຂົ້າຮຽນຕໍ່ພາຍໃນປະ ເທດ ປະຈໍາສົກຮຽນ 2023-2024;

**3. ວຽກການຈັດຕັ້ງປະຕິບັດແນວທາງການຕ່າງປະເທດ**

1. ປະສານງານ, ໃຫ້ການຮ່ວມມື ແລະ ຮ່ວມເຮັດວຽກຮ່ວມກັບ ຄູ່ຮ່ວມພັດທະນາ ແລະ ຊ່ຽວຊານສາກົນ ເພື່ອຈັດຕັ້ງປະຕິບັດຍຸດທະສາດຊັບພະຍາກອນມະນຸດແຫ່ງຊາດ ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ທັງພາຍໃນ ແລະ ພາກພື້ນ ເພື່ອຮ່ວມມື ແລະ ດຶງການຊ່ວຍເຫຼືອກ່ຽວກັບວຽກງານທີ່ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ຄື:
    1) ປະສານງານ ແລະ ເປັນຄະນະວິຊາການ ໃນຂອບວຽກ ASEAN Declaration on Human Resources Development for The Changing World of Work;
    2) ປະສານງານ ແລະ ເປັນຄະນະວິຊາການ ໃນຂອບວຽກ ຂອບຍຸດທະສາດການຮ່ວມມືດ້ານເສດຖະກິດແມ່ນ້ຳອິລາວະດີ-ແມ່ນ້ຳເຈົ້າພະຍາ-ແມ່ນ້ຳຂອງ (ACMECS) ເສົາຄ້ຳທີ 3 "Smart and Sustainable ACMECS"
    3) ປະຕິບັດໂຄງການ ສະຖາບັນລາວ-ອົດສະຕຣາລີ;
    4) ປະຕິບັດໂຄງການ E4E;
    5) ປະຕິບັດໂຄງການ SSHEP;
    6) ປະສານງານ ແລະຍາດແຍ່ງການຊ່ວຍເຫຼືອນຳໂຄງການ UNDP, WB ແລະ ອື່ນໆ;
    7) ສືບຕໍ່ເປັນເສນາທິການ ແລະ ເປັນກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ.

## IV. ຕີລາຄາຈຸດດີ-ຈຸດອ່ອນ

### 1) ຈຸດດີ

- ເອົາໃຈໃສ່ຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານກຳມະບານ ແລະ ວຽກງານມະຫາຊົນ ຢ່າງໃກ້ຊິດ;
- ສະມາຊິກກຳມະບານ ມີຄວາມຫ້າວຫັນໃນການເຄື່ອນໄຫວວຽກງານກຳມະບານ ພາຍໃຕ້ການຊີ້ນຳ ນຳພາຂອງຄະນະພັກ ແລະ ຮາກຖານກຳມະບານ ກົມແຜນການ, ກະຊວງ ສສກ ເນັ້ນໃສ່ການປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ;
- ມີຄວາມຮັບຜິດຊອບສູງ ຕໍ່ວຽກງານວິຊາສະເພາະ ທີ່ຖືກມອບໝາຍ ແລະ ປະຕິບັດວຽກງານສຳເລັດ ຕາມພາລະບົດບາດ,ມີແນວຄິດອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ແນວທາງການນຳພາຂອງພັກ, ນັບຖືກົດໝາຍຂອງລັດ, ມີສະຕິໃນການດຳລົງຊີວິດປະຈຳວັນ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ທີ່ຖືກມອບໝາຍ.

## 2) ຈຸດອ່ອນ

- ການປະຊຸມ ຮ່ວມຊີວິດການເມືອງຂອງຈຸກຳມະບານຫ້ອງການພັດທະນາຊັບພະຍາກອນມະນຸດຍັງບໍ່ທັນເປັນປົກກະຕິ; ເນື່ອງຈາກສະມາຊິກສ່ວນຫຼາຍ ຕິດພັນກັບໜ້າວຽກວິຊາການ ທີ່ມີຄວາມຮີບດ່ວນ ແລະ ຖືໄດ້ວ່າເປັນບູລິມະສິດ.
- ການຈັດຕັ້ງປະຕິບັດວຽກງານ ມີຄວາມຈຳເປັນຕ້ອງໄດ້ໃຊ້ຄວາມຮູ້ດ້ານພາສາອັງກິດ ແລະ IT, ພະນັກງານ/ສະມາຊິກກຳມະບານບາງສະຫາຍ ຍັງມີທັກສະດ້ານພາສາອັງກິດ ແລະ IT ບໍ່ສູງເທົ່າທີ່ຄວນ.

## 3) ຂໍ້ສະເໜີ

1. ສະເໜີໃຫ້ສ້າງຂະບວນການ ເຄື່ອນໄຫວວຽກງານຂອງ 3 ອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ກຳມະບານ) ເຊັ່ນ: ແລກປ່ຽນຄວາມຮູ້ດ້ານການນຳໃຊ້ລະບົບ IT, ທັດສະນະສຶກສາ ຢູ່ສະຖານທີ່ທາງປະຫວັດສາດ, ຫໍພິພິດທະພັນທ່ານຜູ້ນຳ, ບໍລິຈາກເລືອດຊ່ວຍເຫຼືອສັງຄົມ ແລະ ກິດຈະກຳອື່ນໆ ຕາມຄວາມເໝາະສົມ.
2. ສະເໜີໃຫ້ສ້າງຄັງເງິນລວມ ຂອງ 3 ອົງການຈັດຕັ້ງມະຫາຊົນ ກົມແຜນການ ເພື່ອນຳໃຊ້ເຂົ້າໃນວຽກງານສະຫວັດດີການຕ່າງໆ, ການຢັ້ງຢາມພະນັກງານເວລາເຈັບປ່ວຍ ແລະ ອື່ນໆ.

# V. ທິດທາງແຜນການເຄື່ອນໄຫວດ້ານຂະບວນການ ແລະ ດ້ານວິຊາສະເພາະ

## 1. ແຜນການເຄື່ອນໄຫວວຽກກຳມະບານ ໃນໄລຍະປີ 2024.

- ເຂົ້າຮ່ວມຂະບວນການເຄື່ອນໄຫວ ວຽກງານກຳມະບານ, ອອກແຮງງານ, ເວນຍາມ, ຟັງປະຖະກະຖາ ແລະ ກິດຈະກຳອື່ນໆ ໃນແຕ່ລະໄລຍະ; ອີງຕາມແຈ້ງການຂອງຄະນະພັກ ແລະ ຮາກຖານກຳມະບານ ກົມແຜນການວາງອອກ.
- ສືບຕໍ່ເກັບກຳຂໍ້ມູນ ຜົນງານການເຄື່ອນໄຫວວຽກງານກຳມະບານ ແລະ ວຽກງານວິຊາການ ຂອງສະມາຊິກກຳມະບານ ພາຍໃນຈຸ ເພື່ອສັງລວມເປັນບົດລາຍງານ ປະຈຳແຕ່ລະໄຕມາດ.

## 2. ແຜນຈັດຕັ້ງປະຕິບັດວຽກວິຊາສະເພາະ ໄລຍະປີ 2024.

- ເຜີຍແຜ່ມະຕິ ວ່າດ້ວຍ ການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ ຕອບສະໜອງໃຫ້ແກ່ການພັດທະນາ ໃນເງື່ອນໄຂໃໝ່;
- ກະກຽມປະເມີນຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ 2016-2025 ແລະ ຄົ້ນຄ້ວາສ້າງຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ 2026-2035;
- ສືບຕໍ່ຄົ້ນຄ້ວາປັບປຸງຍົກລະດັບກົງຈັກ ແລະ ບຸກຄະລາກອນຂອງຫ້ອງການພັດທະນາຊັບພະຍາກອນມະນຸດ;
- ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດຂັ້ນສູນກາງ ແລະ ຂັ້ນແຂວງ;
- ສ້າງແຜນແບ່ງປັນສັບຊ້ອນ ນັກຮຽນ-ພະນັກງານ ເຂົ້າຮຽນຕໍ່ພາຍໃນປະເທດ ປະຈຳສົກຮຽນ 2024-2025;
- ຈັດກອງປະຊຸມຝຶກອົບຮົມລະບົບໂປແກຣມຖານຂໍ້ມູນແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານໃຫ້ແກ່ສະຖາບັນການສຶກສາໃນຂອບເຂດທົ່ວປະເທດ;
- ເຜີຍແຜ່ລະບົບເວບຊ້າຍຂອງຫ້ອງການພັດທະນາຊັບພະຍາກອນມະນຸດ;

- ເຜີຍແຜ່ບົດປະເມີນກາງສະໄໝ ການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະ ນຸດ ແຫ່ງຊາດ ໄລຍະ 2021-2023 ແລະ ແຜນປະຕິບັດງານ ໄລຍະ 2023-2025;
- ກະກຽມກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ XII ຂອງຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ;
- ສໍາເລັດການສ້າງບົດລາຍງານ ຄວາມຕ້ອງການທັກສະ ຂອງພາກເອກະຊົນ ໃນ 7 ແຂວງເປົ້າໝາຍ: ນະຄອນຫຼວງວຽງຈັນ, ແຂວງ ວຽງຈັນ, ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ, ຫຼວງພະບາງ ແລະ ໄຊຍະບູລີ;
- ເຜີຍແຜ່ບົດລາຍງານ ຜົນການສໍາຫຼວດຄວາມຕ້ອງການທັກສະ ຂອງພາກເອກະຊົນ ປີ 2023;
- ສືບຕໍ່ການຝຶກອົບຮົມກ່ຽວກັບການພັດທະນາຊັບພະຍາກອນມະນຸດ (Modular Training) ໂມດູນທີ 3, ໂມດູນທີ4, ໂມດູນທີ5 ແລະ ໂມດູນ6 ໃຫ້ແກ່ ຄະນະກໍາມະການພັດທະນາຊັບພະຍາກອນມະນຸດ 6 ພາກສ່ວນ: ກະຊວງ ສຶກສາທິການ ແລະ ກິລາ, ພາຍໃນ, ແຜນການ ແລະ ການລົງທຶນ, ສູນກາງສະຫະພັນແມ່ຍິງລາວ, ຄະນະພົວພັນຕ່າງປະເທດສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ;

**ຫົວໜ້າຈຸພັກ** **ຫົວໜ້າຈຸກໍາມະບານ**

## ຮູບພາບການເຄື່ອນໄຫວວຽກງານກຳມະບານ ແລະ ວຽກງານວິຊາສະເພາະ
## ຂອງຈຸກຳມະບານຫ້ອງການພັດທະນາຊັບພະຍາກອນມະນຸດ , ກົມແຜນການ
## ໄລຍະປີ 2023

ວັນທີ 15 ກັນຍາ 2023: ສະມາຊິກກຳມະບານ ຈຸຫ້ອງການພັດທະນາຊັບພະຍາກອນມະນຸດ ທຸກທ່ານ ໄດ້ເຂົ້າຮ່ວມພິທີປະກາດການຈັດຕັ້ງ, ແຕ່ງຕັ້ງ ທ່ານ ນາງ ດາວ ວຽງ ພົງສະຫວັດ ເປັນຮອງຫົວໜ້າກົມແຜນການຄົນໃໝ່.




